ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---===000===---

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0191/24 /ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 08 ສິງຫາ 2024

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 3/2024, ທີ່ຈັດຂຶ້ນໃນວັນທີ 08 ສິງຫາ 2024

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 3/2024, ທີ່ຈັດຂຶ້ນໃນວັນທີ 08 ສິງຫາ 2024 ເຊິ່ງມີວາລະຮັບຮອງເອົາມະຕິທີ່ສຳຄັນ ດັ່ງນີ້:

1. ອະນຸມັດງົບສະແດງສະຖານະທາງການເງິນຂອງບໍລິສັດ (ງົບດຸນ ແລະ ງົບກຳໄລສຳເລັດ) 6 ເດືອນຕົ້ນ ປີ 2024 ທີ່ຜ່ານການທົບທວນ (Reviewed) ຈາກຜູ້ກວດສອບພາຍນອກຮຽບຮ້ອຍແລ້ວ ເພື່ອເປີດເຜີຍສູ່ສາທາລະນະຜ່ານລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ.
2. ຮັບຊາບລາຍງານການກວດສອບພາຍໃນ ຄັ້ງທີ 1 ປະຈຳປີ 2024.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ

(ທ່ານ ມານີ ຕຣີລິດວິໄລ)